ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ໄຊຍະບູລີ

ເລກທີ 286/ຈຂ.ຊຍ
ໄຊຍະບູລີ, ວັນທີ 21/ 3 / 2019

# ຂໍ້ຕົກລົງ
# ວ່າດ້ວຍການສ້າງຕັ້ງກອງທຶນ
# ຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ III ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ ກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2017, ໝວດທີ VIII ມາດຕາ 48 ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ, ອີງຕາມ ດຳລັດຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 267/ລບ, ລົງວັນທີ 5 ສິງຫາ 2014 ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ອີງຕາມ ຄຳສັ່ງ, ສະບັບເລກທີ 07/ນຍ ລົງວັນທີ 05 ເມສາ 2017 ວ່າດ້ວຍການຂຶ້ນບັນຊີເກົ້າໂຮມຊັບສິນທີ່ສານຕັດສິນຮິບເປັນຂອງລັດ.
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012 ພາກທີ IV ໝວດທີ V ມາດຕາ 77 ວ່າດ້ວຍການສ້າງຄຳສັ່ງ, ຂໍ້ຕົກລົງ ແລະ ຄຳແນະນຳຂອງທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ ມະຕິຂອງສະພາປະຊາຊົນ ແຂວງ ໄຊຍະບູລີ ກ່ຽວກັບການຮັບຮອງເອົາຂໍ້ຕົກລົງວ່າດ້ວຍການສ້າງຕັ້ງກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ສະບັບເລກທີ 19/ສພຂ.ຊຍ, ລົງວັນທີ 1 ກຸມພາ 2019

## ເຈົ້າແຂວງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການກ່ຽວກັບການສ້າງຕັ້ງ ຄຸ້ມຄອງ, ນຳໃຊ້ເງິນກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ, ການຊ່ວຍເຫຼືອຈາກບຸກຄົນ, ນິຕິບຸກຄົນ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາຮັບໃຊ້ປິ່ນປົວຟື້ນຟູສຸຂະພາບ ແລະ ຝຶກ

ວິຊາຊີບໃຫ້ແກ່ຜູ້ຕິດຢາເສບຕິດ ເພື່ອແນ່ໃສ່ເຮັດໃຫ້ຜູ້ຕິດຢາເສບຕິດໄດ້ຮັບການປິ່ນປົວ, ບໍາບັດຟື້ນຟູສຸຂະພາບໃຫ້ແຂງແຮງ.

**ມາດຕາ 2 ນິຍາມ**

ກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ແມ່ນການຈັດຕັ້ງໜຶ່ງ, ສ້າງຕັ້ງຂຶ້ນເພື່ອພັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຢາເສບຕິດ ເພື່ອລະດົມທຶນ ແລະ ຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງກອງທຶນໃຫ້ມີຄວາມໂປ່ງໃສ, ມີປະສິດທິຜົນສູງ ແລະ ສາມາດກວດກາໄດ້.

**ມາດຕາ 3 ອະທິບາຍຄໍາສັບ**

1. ກຄສຂ ໝາຍເຖິງຊື່ຫຍໍ້ ກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດຂັ້ນແຂວງ;
2. ກຄສມ ໝາຍເຖິງຊື່ຫຍໍ້ ກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດຂັ້ນເມືອງ;
3. ການຄວບຄຸມຢາເສບຕິດ ໝາຍເຖິງການຄຸ້ມຄອງ, ການຈໍາກັດການຜະລິດ, ການປຸງແຕ່ງສານເສບຕິດ;
4. ການສະກັດກັ້ນ ໝາຍເຖິງການປ້ອງກັນບໍ່ໃຫ້ຢາເສບຕິດ ມີຢູ່ໃນແຂວງ ໄຊຍະບູລີ;
5. ການຕ້ານຢາເສບຕິດ ໝາຍເຖິງການປາບປາມຢາເສບຕິດ, ເກືອດຫ້າມ, ລວມທັງການແກ້ໄຂຜົນຮ້າຍຈາກຢາເສບຕິດ;
6. ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ໝາຍເຖິງບ່ອນບໍາບັດປິ່ນປົວຜູ້ເສບຢາເສບຕິດ ເພື່ອໃຫ້ອອກຈາກຢາເສບຕິດພ້ອມທັງມີການຝຶກວິຊາອາຊີບ;
7. ຢາເສບຕິດໝາຍເຖິງສານກະຕຸ້ນ ຫຼື ສານລະງັບປະສາດ.

**ມາດຕາ 4 ຫຼັກການບໍລິຫານກອງທຶນ**

1. ຮັບປະກັນການຕິດຕາມກວດກາ, ຕີລາຄາ, ສະຫຼຸບ ແລະ ລາຍງານເປັນປົກກະຕິ, ລາຍຮັບ-ລາຍຈ່າຍ ແຕ່ລະເດືອນ;
2. ຮັບປະກັນຄວາມໂປ່ງໃສໃນການບໍລິຫານ, ການນໍາໃຊ້ກອງທຶນໃຫ້ບັນລຸເປົ້າໝາຍ ແລະ ມີປະສິດທິຜົນສູງ;
3. ສະຫຼຸບລາຍງານສະຖິຕິ ຜູ້ທີ່ຖືກບໍາບັດຟື້ນຟູສຸຂະພາບຈາກຢາເສບຕິດ ທຸກເດືອນໃຫ້ຄະນະກໍາມະການກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ.

**ມາດຕາ 5 ຂອບເຂດການນໍາໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນກັບວຽກງານກວດກາ, ຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນແຂວງ ໄຊຍະບູລີ.

**ມາດຕາ 6 ການຮ່ວມມືສາກົນ**

ລັດສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດໃນການຊ່ວຍເຫຼືອໃຫ້ຜູ້ຕິດຢາເສບຕິດໂດຍສອດຄ່ອງກັບກົດໝາຍ.

## ໝວດທີ 2
## ການສ້າງຕັ້ງ ແລະ ເຄື່ອນໄຫວຂອງກອງທຶນ

**ມາດຕາ 7 ການສ້າງຕັ້ງກອງທຶນ**

1. ເພື່ອຮັບໃຊ້ໃຫ້ແກ່ວຽກງານຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ຢູ່ໃນແຂວງ ໄຊຍະບູລີ ບໍ່ໃຫ້ມີການແຜ່ລະບາດ;
2. ເພື່ອແນ່ໃສ່ຟື້ນຟູສຸຂະພາບ, ຝຶກວິຊາອາຊີບ ໃຫ້ແກ່ຜູ້ທີ່ຕິດຢາເສບຕິດ;

3. ກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດມີ 5 ສູນ ຄື:

3.1 ສູນທີ 01 ແມ່ນສູນບຳຂັ້ນແຂວງ;

3.2 ສູນທີ 02 ມີສີ່ເມືອງເໜືອຄື: ເມືອງ ຄອບ, ເມືອງ ຊຽງຮ່ອນ, ເມືອງ ເງິນ ແລະ ເມືອງ ຫົງສາ, ໃຫ້ຈັດຕັ້ງຄະນະກຳມະການກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ສູນບຳບັດຟື້ນຟູສຸຂະພາບຢູ່ເມືອງ ເງິນ;

3.3 ສູນທີ 03 ມີສາມເມືອງກາງມີຄື: ເມືອງ ໄຊຍະບູລີ, ເມືອງ ໄຊສະຖານ ແລະ ເມືອງ ພຽງ ໃຫ້ຈັດຕັ້ງຄະນະກຳມະການກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ສູນບາບັດຟື້ນຟູສຸຂະພາບຢູ່ເມືອງ ໄຊຍະບູລີ;

3.4 ສູທີ 04 ມີສອງເມືອງຄື: ເມືອງ ປາກລາຍ ແລະ ເມືອງ ທົ່ງມີໄຊ ໃຫ້ຈັດຕັ້ງຄະນະກຳມະການກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ສູນບຳບັດຟື້ນຟູສຸຂະພາບຢູ່ເມືອງ ປາກລາຍ;

3.5 ສູນທີ 05 ມີສອງເມືອງຄື: ເມືອງ ແກ່ນທ້າວ ແລະ ເມືອງ ບໍ່ແຕນ ໃຫ້ຈັດຕັ້ງຄະນະກຳມະການກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ສູນບຳບັດຟື້ນຟູສຸຂະພາບຢູ່ເມືອງ ແກ່ນທ້າວ;

ສ່ວນລະບຽບການຂອງສູນບຳບັດຟື້ນຟູສຸຂະພາບ ຜູ້ຕິດຢາເສບຕິດ ຈະໄດ້ກຳນົດໄວ້ໃນລະບຽບການສະເພາະ.

ມາດຕາ 8 ການເຄື່ອນໄຫວຂອງກອງທຶນ

1. ຄະນະກຳມະການກອງທຶນເຄື່ອນໄຫວຕາມ ສິດ ແລະ ໜ້າທີ່, ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
2. ພາຍຫຼັງມີທຶນແລ້ວ ຕ້ອງແຈ້ງໃຫ້ຄະນະກຳມະການກອງທຶນຮັບຊາບໃນແຕ່ລະເດືອນ;
3. ສະຫຼຸບລາຍງານ ລາຍຮັບ-ລາຍຈ່າຍ ໃຫ້ປະທານຄະນະກຳມະການຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ, ອົງການປົກຄອງແຂວງ, ເມືອງ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງ ທຸກເດືອນ;
4. ຈັດກອງປະຊຸມສະຫຼຸບ, ວາງແຜນການເຄື່ອນໄຫວ ແລະ ແລກປ່ຽນບົດຮຽນ ຄົ້ນຄວ້າຊອກຫາແຫຼ່ງທຶນຈາກພາກສ່ວນຕ່າງໆ;
5. ສ້າງກິດຈະກຳຕ່າງໆໃຫ້ມີລາຍຮັບເຂົ້າກອງທຶນ ເປັນຕົ້ນແມ່ນ ການສະແດງຄອນເສີດ, ສິລະປະວັນນະຄະດີ ແລະ ແຂ່ງຂັນກິລາ.
6. ລົງໂຄສະນາສຶກສາອົບຮົມໃນທົ່ວແຂວງ.

## ໝວດທີ 3

## ຄະນະກຳມະການຄຸ້ມຄອງ ແລະ ກວດກາກອງທຶນ

ມາດຕາ 9 ຄະນະກຳມະການຄຸ້ມຄອງ ແລະ ກວດກາກອງທຶນຂັ້ນແຂວງ

1. ຮອງ ເຈົ້າແຂວງ — ເປັນປະທານ
2. ຫົວໜ້າ ກອງບັນຊາການ ປກສ ແຂວງ — ເປັນຮອງປະທານ
3. ຮອງ ກອງບັນຊາການ ທະຫານແຂວງ — ເປັນກຳມະການ
4. ຮອງຫົວໜ້າ ພະແນກຍຸຕິທຳແຂວງ — ເປັນກຳມະການ
5. ຮອງຫົວໜ້າ ອົງການໄອຍະການປະຊາຊົນແຂວງ — ເປັນກຳມະການ
6. ຮອງ ປະທານສານປະຊາຊົນແຂວງ — ເປັນກຳມະການ

7. ຮອງຫົວໜ້າ ພະແນກສາທາລະນະສຸກແຂວງ ເປັນກຳມະການ
8. ຮອງຫົວໜ້າ ພະແນກການເງິນແຂວງ ເປັນກຳມະການ
9. ຮອງຫົວໜ້າ ພະແນກແຜນການ ແລະ ການລົງທຶນແຂວງ ເປັນກຳມະການ
10. ຮອງຫົວໜ້າ ພະແນກ ແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນກຳມະການ
11. ຫົວໜ້າ ຫ້ອງຕຳຫຼວດ ປກສ ແຂວງ ເປັນກຳມະການ

**ມາດຕາ 10 ສິດ ແລະ ໜ້າທີ່ ຂອງຄະນະກຳມະການກອງທຶນຂັ້ນແຂວງ**

1. ຄຸ້ມຄອງບໍລິຫານກອງທຶນເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍແຜນຍຸດທະສາດ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ, ໂຄສະນາເຜີຍແຜ່ກົດໝາຍ, ມະຕິ, ຄຳສັ່ງ ສຶກສາອົບຮົມເພື່ອສ້າງຈິດສຳນຶກໃຫ້ທົ່ວສັງຄົມຮັບຮູ້ ແລະ ເຂົ້າໃຈເຖິງຜົນຮ້າຍຂອງຢາເສບຕິດ;
2. ຄົ້ນຄວ້າພິຈາລະນາແຜນງົບປະມານ ແລະ ແຜນເຄື່ອນໄຫວວຽກງານປະຈຳປີ ຂອງກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດເພື່ອນຳສະເໜີຕໍ່ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນຂອງຕົນ;
3. ຄົ້ນຄວ້າສ້າງລະບຽບການກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ ແລະ ນຳໃຊ້ກອງທຶນລວມທັງຊັບສິນ, ພາຫະນະ, ວັດຖຸ, ອຸປະກອນ ເພື່ອນຳສະເໜີໃຫ້ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນຂອງຕົນພິຈາລະນາ;
4. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງບຸກຄະລາກອນ, ກຳນົດຂອບເຂດສິດ ແລະ ໜ້າທີ່ ຂອງຫົວໜ້າກອງເລຂາກອງທຶນຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ປຸກລະດົມ ແລະ ຊອກຫາແຫຼ່ງທຶນຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເຂົ້າກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ;
6. ຄຸ້ມຄອງຕິດຕາມ, ກວດກາການເຄື່ອນໄຫວ, ການນຳໃຊ້ກອງທຶນໃຫ້ສອດຄ່ອງກັບລະບຽບການ, ແຜນການ ແລະ ມີປະສິດທິຜົນ;
7. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນໃຫ້ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນຂອງຕົນ ໃຫ້ເປັນປົກກະຕິ;
8. ສະຫຼຸບລາຍງານລາຍຮັບ-ລາຍຈ່າຍ ແຕ່ລະເດືອນໃຫ້ປະທານຄະນະກຳມະການຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ, ອົງການປົກຄອງແຂວງ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ;
9. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 11 ຄະນະກອງເລຂາ ກອງທຶນຂັ້ນແຂວງ**

1. ຮອງຫົວໜ້າ ກອງບັນຊາການ ປກສ ແຂວງ ເປັນຫົວໜ້າ
2. ຮອງຫົວໜ້າ ຫ້ອງການ ກອງບັນຊາການ ປກສ ແຂວງ ເປັນຮອງ
3. ຮອງຫົວໜ້າ ຫ້ອງຕຳຫຼວດ ປກສ ແຂວງ ເປັນຄະນະ
4. ຮອງຫົວໜ້າ ຫ້ອງພະລາທິການ ປກສ ແຂວງ ເປັນຄະນະ
5. ຫົວໜ້າ ພະແນກ ຄົ້ນຄວ້າວິທະຍາສາດ-ປະຫວັດສາດ, ນິຕິກຳ ແລະ ກົດໝາຍ ເປັນຄະນະ
6. ຫົວໜ້າ ພະແນກຕຳຫຼວດ ກວດກາ ແລະ ຄວບຄຸມຢາເສບຕິດ ເປັນຄະນະ
7. ຫົວໜ້າ ພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານຢາເສບຕິດ ເປັນຄະນະ
( ເປັນຜູ້ສັງລວມວຽກ )

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງຄະນະກອງເລຂາກອງທຶນຂັ້ນແຂວງ**

1. ສັງລວມ ແລະ ນຳສະເໜີແຜນການ, ການນຳໃຊ້ກອງທຶນ ຕໍ່ຄະນະກຳມະການກອງທຶນຂັ້ນແຂວງ;

2. ສ້າງແຜນການລະດົມທຶນ ເຂົ້າກອງທຶນຕໍ່ຄະນະກຳມະການຂັ້ນແຂວງ;
3. ສ້າງແຜນການເຄື່ອນໄຫວປະຈຳປີ ຂອງຄະນະກຳມະການ ແລະ ກອງເລຂາ ເພື່ອສະເໜີຕໍ່ຄະນະກຳມະການຂັ້ນແຂວງ;
4. ສ້າງກົດລະບຽບພາຍໃນກ່ຽວກັບການເຄື່ອນໄຫວຂອງຄະນະກຳມະການກອງທຶນ ແລະ ກອງເລຂາ;
5. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກຂອງກອງທຶນຕາມລະບຽບຫຼັກການ;
6. ເບີກຈ່າຍເງິນ ແລະ ວັດຖຸ, ອຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆ ຕາມແຜນການ;
7. ຕິດຕາມກວດກາ ແລະ ປະເມີນຜົນການນຳໃຊ້ກອງທຶນ;
8. ສ້າງກິດຈະກຳ, ປຸກລະດົມ ແລະ ຊອກຫາແຫຼ່ງທຶນເຂົ້າກອງທຶນ;
9. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ 01 ເດືອນ, 03 ເດືອນ, 06 ເດືອນ ແລະ 01 ປີ ໃຫ້ຄະນະກຳມະການຮັບຊາບຢ່າງເປັນປົກກະຕິ;
10. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 13 ຄະນະກຳມະການກອງທຶນຂັ້ນເມືອງ**

| | | |
|---|---|---|
| 1. | ຮອງເຈົ້າເມືອງ | ເປັນປະທານ |
| 2. | ຫົວໜ້າ ກອງບັນຊາການ ປກສ ເມືອງ | ເປັນຮອງ |
| 3. | ຮອງ ກອງບັນຊາການ ທະຫານເມືອງ | ເປັນກຳມະການ |
| 4. | ຮອງ ຫົວໜ້າຫ້ອງການ ຍຸຕິທຳເມືອງ | ເປັນກຳມະການ |
| 5. | ຮອງ ຫົວໜ້າ ຫ້ອງການສາທາລະນະສຸກເມືອງ | ເປັນກຳມະການ |
| 6. | ຮອງຫົວໜ້າຫ້ອງການ ການເງິນເມືອງ | ເປັນກຳມະການ |
| 7. | ຮອງຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ | ເປັນກຳມະການ |
| 8. | ຮອງຫົວໜ້າຫ້ອງການ ແຜນການ ແລະ ການລົງທຶນເມືອງ | ເປັນກຳມະການ |
| 9. | ຫົວໜ້າ ພະແນກຕຳຫຼວດເມືອງ | ເປັນກຳມະການ |
| 10. | ວິຊາການອົງການໄອຍະການປະຊາຊົນເຂດ | ເປັນກຳມະການ |
| 11. | ວິຊາການສານປະຊາຊົນເຂດ | ເປັນກຳມະການ |

**ມາດຕາ 14 ສິດ ແລະ ໜ້າທີ່ຂອງຄະນະກາມະການຂັ້ນເມືອງ**

1. ຄຸ້ມຄອງບໍລິຫານກອງທຶນເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍແຜນຍຸດທະສາດ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ, ໂຄສະນາເຜີຍແຜ່ກົດໝາຍ, ມະຕິ, ຄຳສັ່ງ, ສຶກສາອົບຮົບເພື່ອສ້າງຈິດສຳນຶກໃຫ້ທົ່ວສັງຄົມຮັບຮູ້ ແລະ ເຂົ້າໃຈເຖິງຜົນຮ້າຍຂອງຢາເສບຕິດ;
2. ຄົ້ນຄວ້າພິຈາລະນາແຜນງົບປະມານ ແລະ ແຜນເຄື່ອນໄຫວວຽກງານປະຈຳປີຂອງກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດເພື່ອນຳສະເໜີຕໍ່ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນຂອງຕົນ;
3. ຄົ້ນຄວ້າສ້າງລະບຽບການກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ ແລະ ນຳໃຊ້ກອງທຶນລວມທັງຊັບສິນ, ພາຫະນະ, ວັດຖຸ, ອຸປະກອນ ເພື່ອນຳສະເໜີໃຫ້ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນຂອງຕົນພິຈາລະນາ;
4. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງບຸກຄະລາກອນ, ກຳນົດຂອບເຂດສິດ ແລະ ໜ້າທີ່ ຂອງຫົວໜ້າກອງເລຂາກອງທຶນຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ປຸກລະດົມ ແລະ ຊອກຫາແຫຼ່ງທຶນຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເຂົ້າກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

6. ຄຸ້ມຄອງຕິດຕາມ, ກວດກາການເຄື່ອນໄຫວ, ການນຳໃຊ້ກອງທຶນໃຫ້ສອດຄ່ອງກັບລະບຽບການ, ແຜນການ ແລະ ມີປະສິດທິຜົນ;
7. ສະຫຼຸບ, ລາຍງານສະພາບການເຄື່ອນໄຫວ ວຽກງານຮອບດ້ານຂອງກອງທຶນ ໃຫ້ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນຂອງຕົນໃຫ້ເປັນປົກກະຕິ;
8. ສະຫຼຸບລາຍຮັບ-ລາຍຈ່າຍ ແຕ່ລະເດືອນໃຫ້ປະທານຄະນະກຳມະການຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ, ອົງການປົກຄອງເມືອງ ແລະ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງຂອງເມືອງ;
9. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 15 ຄະນະກອງເລຂາ ກອງທຶນຂັ້ນເມືອງ**

1. ຮອງຫົວໜ້າ ກອງບັນຊາການ ປກສ ເມືອງ — ເປັນຫົວໜ້າ
2. ຫົວໜ້າ ພະແນກຫ້ອງການ ປກສ ເມືອງ — ເປັນຮອງ
3. ຫົວໜ້າ ພະແນກ ຕຳຫຼວດ ປກສ ເມືອງ — ເປັນຄະນະ
4. ຫົວໜ້າ ພະແນກພະລາທິການ ປກສ ເມືອງ — ເປັນຄະນະ

**ມາດຕາ 16 ສິດ ແລະ ໜ້າທີ່ຂອງກອງເລຂາກອງທຶນຂັ້ນເມືອງ**

1. ສັງລວມ ແລະ ນຳສະເໜີແຜນການ, ການນຳໃຊ້ກອງທຶນຕໍ່ຄະນະກຳມະການກອງທຶນຂັ້ນເມືອງ;
2. ສ້າງແຜນການລະດົມທຶນ ເຂົ້າກອງທຶນຕໍ່ຄະນະກຳມະການຂັ້ນເມືອງ;
3. ສ້າງແຜນການເຄື່ອນໄຫວປະຈຳປີຂອງຄະນະກຳມະການ ແລະ ກອງເລຂາພ້ອມໂຄງການລະອຽດ ເພື່ອສະເໜີຕໍ່ຄະນະກຳມະການຂັ້ນເມືອງ;
4. ສ້າງກົດລະບຽບພາຍໃນ ກ່ຽວກັບການເຄື່ອນໄຫວຂອງຄະນະກຳມະການ ແລະ ກອງເລຂາ;
5. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກຂອງກອງທຶນຕາມລະບຽບຫຼັກການ;
6. ເບີກຈ່າຍເງິນ ແລະ ວັດຖຸ, ອຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆ ຕາມແຜນການ;
7. ຕິດຕາມກວດກາ ແລະ ປະເມີນຜົນການນຳໃຊ້ກອງທຶນ;
8. ສ້າງກິດຈະກຳ, ປຸກລະດົມ ແລະ ຊອກຫາແຫຼ່ງທຶນເຂົ້າກອງທຶນ;
9. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ 01 ເດືອນ, 03 ເດືອນ, 06 ເດືອນ ແລະ 01 ປີ ໃຫ້ຄະນະກຳມະການຮັບຊາບຢ່າງເປັນປົກກະຕິ;
10. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 17 ການແຕ່ງຕັ້ງ, ປົດຕຳແໜ່ງຄະນະກຳມະການ, ຄະນະກອງເລຂາ ຂັ້ນແຂວງ ແລະ ຂັ້ນເມືອງ.**

1. ຄະນະກຳມະການຂັ້ນແຂວງ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍເຈົ້າແຂວງ, ຕາມການສະເໜີຂອງປະທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນແຂວງ;
2. ຄະນະກອງເລຂາຂັ້ນແຂວງ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍ ປະທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນແຂວງ;
3. ຄະນະກຳມະການຂັ້ນເມືອງ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍເຈົ້າເມືອງ, ຕາມການສະເໜີຂອງປະທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນເມືອງ;
4. ຄະນະກອງເລຂາຂັ້ນເມືອງ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍ ປະທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນເມືອງ;
5. ຄະນະກຳມະການກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ມີອາຍຸການ 5 ປີ.

ມາດຕາ 18 ການກວດກາກອງທຶນ

1. ກວດກາປົກກະຕິ;
2. ກວດກາໂດຍມີການແຈ້ງການໃຫ້ຮູ້ລ່ວງໜ້າ;
3. ກວດກາແບບກະທັນຫັນ.

## ໝວດທີ 4
## ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນ

ມາດຕາ 19 ແຫຼ່ງລາຍຮັບ

1. ໄດ້ຈາກງົບປະມານຂອງລັດ;
2. ໄດ້ຈາກພັນທະຜູ້ຖືກບຳບັດ, ການສ້າງກິດຈະກຳ, ຈາກຜະລິດຕະພັນຂອງສູນ, ຈາກການຊ່ວຍເຫຼືອຂອງບຸກຄົນ, ນິຕິ ບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
3. ໄດ້ຈາກການຕັດສິນຂອງສານກ່ຽວກັບຄະດີຢາເສບຕິດ ເຊັ່ນ: ການປັບໃໝ, ການຮິບພາຫະນະ, ວັດຖຸສິ່ງຂອງ ແລ້ວມາຕີລາຄາຂາຍຕາມດຳລັດ ເລກທີ 158/ລບ ລົງວັນທີ 04 ມີຖຸນາ 2013;
4. ໄດ້ມາຈາກບຸກຄົນ, ນິຕິບຸກຄົນທີ່ຄ້າ-ຂາຍຢາເສບຕິດ ແລ້ວເອົາຕົວຫຼົບໜີ, ຍຶດໄດ້ແຕ່ພາຫະນະ, ວັດຖຸສິ່ງຂອງ ແຕ່ບໍ່ໄດ້ຕົວຜູ້ກະທຳຜິດພາຍຫຼັງທີ່ສານຕັດສິນຮິບ.

ມາດຕາ 20 ການນຳໃຊ້ກອງທຶນ.

1. ເງິນທີ່ໄດ້ມາຈາກມາດຕາ 19, ຂໍ້ທີ 1 ແລະ ຂໍ້ທີ 2 ແມ່ນນຳໃຊ້ເຂົ້າສູນບຳບັດ 100%, ສ່ວນລາຍຮັບຈາກຂໍ້ທີ 3 ແລະ ຂໍ້ທີ 4 ແມ່ນມອບເຂົ້າງົບປະມານລັດ 30%, ສ່ວນ 70% ແມ່ນເຂົ້າສູນບຳບັດໂດຍຜ່ານຫ້ອງການຊັບສິນຂອງແຂວງ, ລົງບັນຊີຄັງເງິນ ແລ້ວຈຶ່ງມອບເຂົ້າກອງທຶນ ໂດຍເຊັນຜ່ານຄະນະກຳມະການກອງທຶນຮັບຮູ້ນຳ 3 ທ່ານ;
2. ສຳລັບ 11 ເມືອງ ລາຍຮັບທີ່ໄດ້ມາຈາກມາດຕາ 19, ຂໍ້ທີ 1, ຂໍ້ທີ 2 ມອບເຂົ້າສູນບຳບັດ 100%, ລາຍຮັບທີ່ໄດ້ຈາກ ຂໍ້ທີ 3 ແລະ ຂໍ້ທີ 4 ແມ່ນມອບເຂົ້າງົບປະມານລັດ 30%, ສ່ວນ 70% ມອບເຂົ້າສູນບຳບັດ ໂດຍຜ່ານໜ່ວຍງານຊັບສິນຂອງເມືອງ, ລົງບັນຊີຄັງເງິນ ສ່ວນເມືອງທີ່ບໍ່ມີສູນກໍ່ມອບເຂົ້າຄ້າຍຄຸມຂັງ-ດັດສ້າງເມືອງ;
3. ລາຍຮັບຈາກຜະລິດຕະພັນ ຂອງຜູ້ຕິດຢາເສບຕິດທີ່ຜະລິດໄດ້ ຫຼັງຈາກຫັກຕົ້ນທຶນອອກ, ສ່ວນທີ່ເຫຼືອມາຕີເປັນ 100%, ມອບໃຫ້ຜູ້ຜະລິດ 50%, ສ່ວນ 50% ມອບເຂົ້າສູນບຳບັດ, ເມືອງທີ່ບໍ່ມີສູນກໍ່ໃຫ້ມອບເຂົ້າຄ້າຍຄຸມຂັງ-ດັດສ້າງ;
4. ລາຍຮັບຈາກ ມາດຕາ 19 ຂໍ້ທີ 1 ແລະ ຂໍ້ທີ 2, ມາຕີເປັນ 100% ນຳໃຊ້ດັ່ງນີ້:
   - 4.1. ນຳໃຊ້ເຂົ້າສູນບຳບັດຂັ້ນແຂວງ 80%;
   - 4.2. ນຳໃຊ້ເຂົ້າສູນບຳບັດຂັ້ນເມືອງ 20%, ( ສູນລະ 5% );
5. ລາຍຮັບຈາກມາດຕາ 19, ຂໍ້ທີ 3 ແລະ ຂໍ້ທີ 4, 70% ມາຕີເປັນ 100% ນຳໃຊ້ດັ່ງນີ້:
   - 5.1. ນຳໃຊ້ເຂົ້າໃນການດຳເນີນຄະດີຂອງເຈົ້າໜ້າທີ່ສືບສວນ-ສອບສວນຕຳຫຼວດ 15%, ອົງການໄອຍະການປະຊາຊົນແຂວງ 5%, ສານປະຊາຊົນ 5%, ເຂົ້າໃນການທຳລາຍຢາເສບຕິດແຕ່ລະປີ 5%;
   - 5.2. ນຳໃຊ້ເຂົ້າສູນບຳບັດຂັ້ນແຂວງ 30%;
   - 5.3. ນຳໃຊ້ເຂົ້າສູນບຳບັດຂັ້ນເມືອງ 20%, ມີ 04 ເມືອງຄື: ເມືອງ ແກ່ນທ້າວ 5%, ເມືອງ ປາກລາຍ 5%, ເມືອງ ໄຊຍະບູລີ 5%, ເມືອງ ເງິນ 5%;

5.4. ນຳໃຊ້ເຂົ້າໃນການກວດກາວິໄຈຢາເສບຕິດ 5%;

5.5. ນຳໃຊ້ເຂົ້າໃນການຄຸ້ມຄອງ, ກວດກາ, ບໍລິຫານຈັດກອງປະຊຸມຂອງກອງທຶນ 5%;

5.6. ນຳໃຊ້ເຂົ້າໃນການໂຄສະນາສຶກສາອົບຮົມ 5% ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ 5%.

6. ລາຍຮັບຈາກ ມາດຕາ 20 ຂໍ້ທີ 4.1, 80% ແລະ ຂໍ້ 5.2, 30% ມາຕີເປັນ 100% ນຳໃຊ້ດັ່ງນີ້:

6.1. ນຳໃຊ້ຊື້ຢາກວດນ້ຳປັດສະວະ 20%;

6.2. ນຳໃຊ້ຊື້ຢາປິ່ນປົວຜູ້ຕິດຢາເສບຕິດ ຕາມໃບສັ່ງຢາຂອງແພດ 20%;

6.3. ນຳໃຊ້ເຂົ້າໃນກິດຈະກຳຝຶກວິຊາຊີບ 20%;

6.4. ນຳໃຊ້ເຂົ້າໃນການບູລະນະສ້ອມແປງສູນບຳບັດຟື້ນຟູສຸຂະພາບ 20%;

6.5. ນຳໃຊ້ເປັນອັດຕາກິນຜູ້ຕິດຢາເສບຕິດ ເຊິ່ງຄອບຄົວບໍ່ສາມາດຈ່າຍໄດ້ເປັນຄອບຄົວທີ່ບໍ່ມີແຮງງານບໍ່ມີລາຍຮັບ 20%.

7. ລາຍຮັບຈາກງົບປະມານຂອງລັດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ( ຖ້າມີ ) ຢູ່ຂັ້ນເມືອງ, ກໍ່ໃຫ້ມອບເຂົ້າສູນບຳບັດຟື້ນຟູສຸຂະພາບ 100%, ລາຍຮັບຈາກສານຕັດສິນປັບ ໃໝຮິບພາຫະນະ, ວັດຖຸສິ່ງຂອງ ( ຖ້າມີ ) ຢູ່ຂັ້ນເມືອງ, ມອບງົບປະມານລັດ 30%, ສ່ວນ 70% ມາຕີເປັນ 100% ນຳໃຊ້ດັ່ງນີ້:

7.1. ນຳໃຊ້ເຂົ້າໃນການດຳເນີນຄະດີຂອງເຈົ້າໜ້າທີ່ສືບສວນ-ສອບສວນຕຳຫຼວດເມືອງ 15%, ໄອຍະການປະຈຳເມືອງ 5% (ສານປະຊາຊົນເຂດ 5% ຕັ້ງຢູ່ເມືອງໃດໃຫ້ເອົານຳແຕ່ເມືອງນັ້ນ);

7.2. ນຳໃຊ້ເຂົ້າສູນບຳບັດຂອງເມືອງ 50%;

7.3. ນຳໃຊ້ເຂົ້າການຄຸ້ມຄອງ, ກວດກາ, ບໍລິຫານ, ຈັດກອງປະຊຸມຂອງກອງທຶນ 10%;

7.4. ນຳໃຊ້ເຂົ້າໃນການໂຄສະນາສຶກສາອົບຮົມ 10% ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານຂອງເມືອງ 5%.

8. ລາຍຮັບຈາກ ມາດຕາ 20 ຂໍ້ທີ 7 ແລະ ຂໍ້ທີ 7.2, 50%, ມາຕີເປັນ 100% ນຳໃຊ້ດັ່ງນີ້:

8.1. ນຳໃຊ້ຊື້ຢາກວດນ້ຳປັດສະວະ 20%;

8.2. ນຳໃຊ້ຊື້ຢາປິ່ນປົວຜູ້ຕິດຢາເສບຕິດ ຕາມການສັ່ງຂອງແພດ 20%;

8.3. ນຳໃຊ້ເຂົ້າໃນກິດຈະກຳຝຶກວິຊາຊີບ 20%;

8.4. ນຳໃຊ້ເຂົ້າໃນການບູລະນະສ້ອມແປງສູນບຳບັດຟື້ນຟູສຸຂະພາບ 20%;

8.5. ນຳໃຊ້ຊ່ວຍຄອບຄົວຜູ້ຕິດຢາເສບຕິດ ທີ່ບໍ່ສາມາດຊຳລະໄດ້ເປັນຄອບຄົວທີ່ບໍ່ມີແຮງງານ, ບໍ່ມີລາຍຮັບ 20%.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 21 ຂໍ້ຫ້າມທົ່ວໄປ

1. ຫ້າມບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງສາກົນ, ອົງການທີ່ບໍ່ຂຶ້ນກັບລັດຖະບານທັງພາຍໃນ ແລະ ຕ່າງປະເທດ ເຄື່ອນໄຫວລະດົມທຶນທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້ ແລະ ກົດໝາຍ ແຫ່ງ ສປປ ລາວ;

2. ຫ້າມຂັດຂວາງ, ນາບຂູ່, ໃຊ້ຄວາມຮຸນແຮງ, ບໍ່ໃຫ້ການຮ່ວມມືຕໍ່ການປະຕິບັດໜ້າທີ່ຂອງພະນັກງານ ຫຼື ເຈົ້າໜ້າທີ່ກ່ຽວຂ້ອງ;

3. ຫ້າມສວຍໃຊ້ແອບອ້າງ ແລະ ປອມແປງເປັນພະນັກງານ ຫຼື ເຈົ້າໜ້າທີ່ກ່ຽວຂ້ອງເພື່ອຫາຜົນປະໂຫຍດສ່ວນຕົວຢ່າງເດັດຂາດ.

**ມາດຕາ 22 ຂໍ້ຫ້າມສຳລັບຄະນະກຳມະການ, ຄະນະກອງເລຂາ, ຂັ້ນແຂວງ ແລະ ຂັ້ນເມືອງ**

1. ຫ້າມອອກຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ນະໂຍບາຍອື່ນໆທີ່ຂັດກັບລັດຖະທຳມະນູນ, ກົດໝາຍ ແລະ ຂໍ້ຕົກລົງສະບັບນີ້;
2. ຫ້າມສວຍໃຊ້, ສິດ ແລະ ໜ້າທີ່ ຕຳແໜ່ງໃນຄວາມຮັບຜິດຊອບຂອງຕົນ ເພື່ອຫາຜົນປະໂຫຍດສ່ວນຕົວ;
3. ຫ້າມອານຸມັດເງິນກອງທຶນໄປຢືມໃຊ້ຈ່າຍຮ່ວງອື່ນ;
4. ເງິນທີ່ໄດ້ມາຈາກງົບປະມານຂອງລັດ, ຫ້ອງການຊັບສິນ, ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມາຊ່ວຍເຫຼືອໃຫ້ເອົາເຂົ້າໃນບັນຊີຄັງເງິນ.

## ໝວດທີ 6
## ການກວດບັນຊີ, ການລາຍງານ ແລະ ລະບອບປະຊຸມ

**ມາດຕາ 23 ການກວດບັນຊີ**

ບັນຊີກອງທຶນ ຕ້ອງໄດ້ຮັບການກວດກາຕາມລະບຽບຫຼັກການ ຊຶ່ງດຳເນີນໂດຍອົງການທີ່ມີສິດອຳນາດຕາມກົດໝາຍ.

**ມາດຕາ 24 ການລາຍງານ**

ຄະນະເລຂາກອງທຶນແຕ່ລະຂັ້ນ ຕ້ອງສົ່ງບົດລາຍງານການເຄື່ອນໄຫວວຽກງານຂອງກອງທຶນ ໃຫ້ເປັນປົກກະຕິ 3 ເດືອນ, 6 ເດືອນ ແລະ 1 ປີ ໃຫ້ປະທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດ, ອົງການປົກຄອງ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງຊາບ.

**ມາດຕາ 25 ລະບອບປະຊຸມ**

1. ຄະນະກຳມະການກອງທຶນ ແລະ ກອງເລຂາ ຈັດຕັ້ງກອງປະຊຸມປະຈຳ 3 ເດືອນ, 6 ເດືອນ ແລະ 1 ປີ ເພື່ອສະຫຼຸບ ແລະ ວາງທິດທາງແຜນການໃນແຕ່ລະໄລຍະ.
2. ຮຽກປະຊຸມ ຕາມສະໄໝວິສາມັນ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 26 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນ ໃນວຽກງານກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ຕ້ອງໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຫາກໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃໝ ໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ ດຳເນີນຄະດີທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 28 ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະກຳມະການກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດແຕ່ລະຂັ້ນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ເຂັ້ມງວດ.

**ມາດຕາ 29 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ເຈົ້າແຂວງ

ພົງສະຫວັນ ສິດທະວົງ